# ການບໍຣິການ ອອມບັສ

ມີໄວ້ຮັບໃຊ້ຊ່ອຍທ່ານແກ້ໄຂການຮ້ອງທຸກແລະການຈົ່ມທຸກຢ່າງກະທັນຫັນແລະເກັບຄວາມລັບໄວ້ດີ.

ໃຜກໍດີທາກຂໍຮ້ອງຫຼືໄດ້ຮັບການບໍຣິການຈາກສູນກາງສາທາຣະນະໂຣກປະສາດສາດໃນຄິ່ງຄາວທີອາຈະໃຊ້ການບໍຣິການເຫຼົ່ານີ້,ຊະມາຊິກຂອງຄອບຄົວ ແລະຄົນອື່ນອາດຈະໃຊ້ໄດ້ເໝືອນກັນ.

ການບໍຣິການອອມບັດບໍ່ໄດ້ເສັຽຄ່າ. ປິດລັບ, ແລະຮັບໃຊ້ໂດຍ Interchange Northwest, ແລະເປັນອົງການເອກຣາດຊຶ່ງໄດ້ສັນຍາມາຈາກໜ່ອຍປະສານງານຂອງການສົ່ງເສີມຂອງເຂດຄິ່ງຄາວທີ.

Interchange Northwest Ombuds Services
ໃຫ້ໂອກາດສະເໝີກັນ ໝົດທຸກໆດ້ານໃນການບໍຣິການ, ການເຄື່ອນໄຫວ, ແລະການຮັບຈ້າງແບບບໍ່ມີການແບ່ງແຍກ ໂດຍປາສະຈາກ, ເຊື້ອຊາດ, ຜິວພັນ, ສາສນາ, ການເຊື່ອຖື, ສັນຊາດເດີມ, ເພດ, ອາຍຸ, ຖານະການແຕ່ງງານ, ການສັບປ່ຽນເພດ, ນັກຣົບເກົ່າປາງວຽດນາມ, ນັກຣົບເກົ່າຜູ້ເສັຽອົງຄະ, ຫຼື ການເສັຽອົງຄະ.

# ສິດທິ ຂອງທ່ານ

ໃນນາມທີ່ເປັນຄົນໄດ້ຮັບການບໍຣິການຮັກສາໂຣກປະສາດ ທ່ານມີສິດທິ:

- ໄດ້ຮັບການນັບຖືແລະໃຫ້ກຽດ
- ສ້າງຕັ້ງແຜນການຂອງການບໍຣິການທີ່ໄດ້ຕາມຄວາມຕ້ອງການຂອງທ່ານ
- ການບໍຣິການຂອງພາສາທີ່ໄດ້ຮັບອະນຸຍາດຫຼືນາຍພາສາກີກແລະອຸປກອນຊຶ່ງປະກອບດ້ວຍການຂີດຂຽນໃນລັກຊນະອື່ນໆເພື່ອໃຫ້ເໝາະສົມກັບພວກເສັຽອົງຄະ
- ປະຕິເສດການປິ່ນປົວສິ່ງໃດສິ່ງນຶ່ງທີ່ສເນີໃຫ້ທ່ານ, ໃຫ້ລ່ອງລອຍຕາມກົດໝາຍ ຈະຕ້ອງອາສາສມັກບໍ່ຍອມຮັບການປິ່ນປົວ Acts (chapters 71.05 and 71.34 Revised Code of Washington)
- ໄດ້ຮັບການເບິ່ງແຍງຊຶ່ງບໍ່ໄດ້ມີຄວາມຈຳແນກທ່ານ, ແລະມີຄວາມອ່ອນໂຍນຕໍ່ເພດຂອງທ່ານ, ເຊື້ອຊາດ, ສັນຊາດເດີມ, ພາສາ, ອາຍຸ, ການເສັຽອົງຄະ, ແລະການສັບປ່ຽນເພດ
- ໂດຍປາສະຈາກຕໍ່ການຂົ່ມຂືນເອົາປຽບທາງເພດແລະການຂົ່ມຂູ່
- ທົບທວນເບິ່ງສຳເນົາຄະດີຂອງທ່ານ
- ໄດ້ຮັບການອະທິບາຍທັງໝົດຂອງຢາທີ່ທ່ານໝໍບົ່ງອອກໃຫ້ທ່ານ, ລວມທັງຜົນທີ່ຈະໄດ້ຮັບຈາກຢາແລະສິ່ງທີ່ອາຈະເປັນຜົນສະທ້ອນ
- ບັນທຶກການຮ້ອງທຸກກັບຜູ້ໃຫ້ການບໍຣິການ, ອອມບັສ, ຫຼືໜ່ອຍປະສານງານຂອງການສົ່ງເສີມເຂດ
- ຂໍຮ້ອງການອູທອນຂອງການປະຕິເສດຕ່າງໆ, ການຕັດສິດ, ການຕັດສິດຊົ່ວຄາວ, ຫຼືການລົດຂອງການບໍຣິການແລະຍັງດຳເນີນໄດ້ຮັບການບໍຣິການໃນຄນະທີ່ລໍຖ້າການຕັດສິນ
- ຂຽນໃບຄຳຮ້ອງທັກທວງເພື່ອເປີດການໂຕ້ຖຽງກັບກົມປະຊາສົງເຄາະ (DSHS)
- ແກ້ໄຂບັນຫາຂອງທ່ານໂດຍປາສະຈາກການຄິດແກ້ແຄ້ນ.
- ໂດຍຢ່າງທີ່ປິດລັບ

ກະຣຸນາຕິດຕໍ່ຫາການບໍຣິການຂອງໂຣກປະສາດອອມບັດຂອງຄິ່ງຄາວທີທີ່ (206) 205-5329 ຫຼື 1-800-790-8049 ສຳຣັບລາຍການອັນຄົບຊຸດຂອງສິດທິແລະໜ້າທີ່ຮັບຜິດຊອບຂອງລູກສມຸນ.

# ການບໍຣິການ ໂຣກປະສາດ ອອມບັສ

ສຳຣັບຄົນທີ່ອາໃສຢູ່ໃນຄິ່ງຄາວທີ

## ການບໍຣິການອອມບັສ ຊ່ອຍຄົນ ແກ້ໄຂ ການຮ້ອງທຸກ

- ຢ່າງໄວວາ,
- ແບບປິດລັບ,
- ແລະບໍ່ໄດ້ເສັຽຄ່າ.

This brochure is available in other languages and alternate formats.

ປຶ້ມນ້ອຍນີ້ມີໄວ້ຮັບໃຊ້ທ່ານໃນ ພາສາແອສ່ປາໂຍນ ແລະໃນລັກສນະອື່ນໆ

# ສິ່ງໃດ ອອມບັສ ຂອງທ່ານເຮັດໄດ້:

- ຟັງສິ່ງທີ່ຂ້ອງໃຈຂອງທ່ານ
- ຄົ້ນຄວ້າຫາເຫດການ
- ໃຫ້ຄວາມປືກສາແນະນຳແກ່ທ່ານ
- ຊ່ອຍທ່ານໃນການແກ້ໄຂບັນຫາໃນຂັ້ນຕ່ຳ ເທົ່າທີ່ຈະຕ່ຳໄດ້
- ກວດຄືນກັບທ່ານເພື່ອຮັບປະກັນວ່າທ່ານບໍ່ໄດ້ ຮັບການຖືກແກ້ແຄ້ນ.

# ສິ່ງທີ່ອອມບັສຂອງທ່ານ ບໍ່ສາມາດ ເຮັດໄດ້:

- ໃຫ້ແນະນຳທ່ານທາງກົດໝາຍ
- ຮັບໃຊ້ທ່ານແບບນາຍໜ້າຄະດີ
- ຮັບປະກັນຜົນໄດ້ຮັບແບບຈຳເພະເຈາະຈົງ

# ສິ່ງທີ່ ທ່ານ ສາມາດເຮັດໄດ້:

- ໃຫ້ລາຍລະອຽດຈຳເພາະເຈາະຈົງກ່ວກັບບັນຫາ
- ໃຫ້ແຈ່ມແຈ້ງວ່າທ່ານຢາກເຫັນຜົນທີ່ໄດ້ຮັບນັ້ນ ເກີດຂື້ນຢ່າງໃດ
- ດຳເນີນຕິດຕໍ່ກັບອອມບັສຂອງທ່ານ

# ການບໍຣິການ ໂຣກປະສາດ ອອມບັສ

ສຳຮັບຄົນທີ່ອາໃສຢູ່ໃນຄິ່ງຄາວທີ

ກະລຸນາຕິດຕໍ່ຫາທ່ານ Dave Black ສຳຣັບການບໍຣິການອອມບັສ

## (206) 205-5329

ຫລືໂທຟຣີທີ່

## 1-800-790-8049 # 3

ທ່ານສາມາດເຂົ້າມາພົບພວກເຮົາຊຶ່ງກັນທີ່ຫ້ອງການຫ້ອງ ຖິ່ນຂອງພວກເຮົາຈາກ 9:00 ໂມງເຊົ້າຫາ 12:00 ໂມງທ່ຽງ ຫຼືຕິດຕໍ່ຫາພວກເຮົາທາງໂທຣະສັບ ຈາກ 12 ໂມງທ່ຽງຫາ 5:00 ໂມງແລງ ວັນຈັນຫາວັນສຸກ. ທ່ານສາມາດສັ່ງຄວາມ ໄວ້ໄດ້ທຸກໆເວລາ ພວກເຮົາຈະຕິດຕໍ່ຄືນຫາທ່ານ.

ຫ້ອງການຂອງໂຣກປະສາດອອມບັສຂອງຄິງຄາວທີ ຕັ້ງຢູ່ທີ່:

Yesler Building, Room 402
400 Yesler Way
Seattle, WA 98104
(206) 205-5329
Toll free 1-800 790-8049 # 3
Fax (206) 205-0854
Ombuds.mhd@kingcounty.gov